426
7/3/19

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງການເງິນ

ຫ້ອງການກະຊວງ

ເລກທີ 0489 /ຫກງ

ນະຄອນຫລວງວຽງຈັນ, ວັນທີ 05 ມີນາ 2019

ກະຊວງອຸດສາຫະກຳ ແລະ ການຄ້າ
ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ
ເລກທີ 0718
ວັນທີ 07-03-19

# ແຈ້ງການ

ເຖິງ : - ການຈັດຕັ້ງພາກລັດ ແລະ ອົງການຈັດຕັ້ງສາກົນ

- ວິສາຫະກິດສ່ວນບຸກຄົນ ຫຼື ນິຕິບຸກຄົນ

ເລື່ອງ : ການອອກເລກປະຈຳຕົວຜູ້ເສຍອາກອນ ( TIN )

- ອີງຕາມ ດຳລັດວ່າດ້ວຍເລກປະຈຳຕົວຜູ້ເສຍອາກອນ ສະບັບເລກທີ 354/ນຍ, ລົງວັນທີ 05 ຕຸລາ 2007;
- ອີງຕາມ ຂໍ້ຕົກລົງ ສະບັບເລກທີ 2929/ກງ ,ລົງວັນທີ 31 ສິງຫາ 2017 ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຫ້ອງການກະຊວງການເງິນ;
- ອີງຕາມ ໜັງສືສະເໜີຂອງ ກົມສ່ວຍສາອາກອນ ສະບັບເລກທີ 0804 /ກສອ, ລົງວັນທີ 01 ມີນາ 2019.

ເພື່ອເຮັດໃຫ້ການອອກເລກປະຈຳຕົວຜູ້ເສຍອາກອນ ມີຄວາມສະດວກ, ວ່ອງໄວ, ງ່າຍດ່າຍ ແລະ ໄດ້ຮັບປະສິດທິຜົນສູງ.

ຫ້ອງການ ກະຊວງການເງິນ ຂໍຖືເປັນກຽດແຈ້ງມາຍັງ ບຸກຄົນ, ນິຕິບຸກຄົນ ແລະ ການຈັດຕັ້ງ ໃນຂອບເຂດທົ່ວປະເທດ ຊາບດັ່ງນີ້ :

1. ກົມສ່ວຍສາອາກອນ ກະຊວງການເງິນ, ກົມທະບຽນ ແລະ ຄຸ້ມຄອງວິສາຫະກິດ ກະຊວງອຸດສາຫະກຳ ແລະ ການຄ້າ ໄດ້ເຊື່ອມໂຍງລະບົບ ເພື່ອອອກເລກປະຈຳຕົວຜູ້ເສຍອາກອນ ພ້ອມດຽວກັບການອອກໃບທະບຽນວິສາຫະກິດ. ສະນັ້ນ, ບຸກຄົນ, ນິຕິບຸກຄົນ ທີ່ໄດ້ແຈ້ງຂຶ້ນທະບຽນວິສາຫະກິດນຳຂະແໜງການອຸດສາຫະກຳ ແລະ ການຄ້າ ຊຶ່ງຕ້ອງໄດ້ອອກເລກປະຈຳຕົວຜູ້ເສຍອາກອນ ດັ່ງນີ້ :
   - ສຳລັບແຂວງໃດທີ່ມີໂຄງການສ້າງລະບົບຂໍ້ມູນຂ່າວສານຄຸ້ມຄອງລາຍຮັບສ່ວຍສາອາກອນ ‘Tax Ris’ ແລ້ວ, ບຸກຄົນ, ນິຕິບຸກຄົນ ທີ່ໄດ້ແຈ້ງຂຶ້ນທະບຽນວິສາຫະກິດ ແມ່ນຈະໄດ້ຮັບເລກປະຈຳຕົວຜູ້ເສຍອາກອນພ້ອມກັບໃບທະບຽນວິສາຫະກິດ ດ້ວຍວິທີການປ້ອນຂໍ້ມູນຂອງຜູ້ທີ່ແຈ້ງຂຶ້ນທະບຽນວິສາຫະກິດ ໂດຍເຈົ້າໜ້າທີ່ທະບຽນວິສາຫະກິດ ເຂົ້າໃນລະບົບອອກໃບທະບຽນວິສາຫະກິດ ເມື່ອຂໍ້ມູນໄດ້ຖືກຮັບຮອງອອກໃບທະບຽນວິສາຫະກິດແລ້ວ ຂໍ້ມູນດັ່ງກ່າວຈະຖືກສົ່ງທາງອີເລັກໂທຣນິກຫາລະບົບ Tax Ris ຂອງກົມສ່ວຍສາອາກອນ ແລະ ລະບົບ Tax Ris ຈະອອກເລກປະຈຳຕົວຜູ້ເສຍອາກອນແບບອັດຕາໂນມັດແລ້ວ ສົ່ງກັບຄືນໃຫ້ລະບົບອອກໃບທະບຽນວິສາຫະກິດ



Scanned with CamScanner

ເພື່ອອອກໃບທະບຽນວິສາຫະກິດ ພ້ອມດ້ວຍເລກປະຈຳຕົວຜູ້ເສຍອາກອນ ໂດຍບໍ່ຕ້ອງກັບເຂົ້າມາພົວພັນຄືນກັບຫ້ອງການສ່ວຍສາອາກອນ;

- ສຳລັບວິສາຫະກິດໃດທີ່ເຄື່ອນໄຫວທຸລະກິດມາແລ້ວ ຍັງບໍ່ທັນມີເລກປະຈຳຕົວຜູ້ເສຍອາກອນ (12 ຕົວເລກ) ແມ່ນໃຫ້ປະກອບຄຳຮ້ອງຂໍເລກປະຈຳຕົວຜູ້ເສຍອາກອນ ແລ້ວຍື່ນຕໍ່ຫ້ອງການສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ ເພື່ອອອກເລກປະຈຳຕົວຜູ້ເສຍອາກອນໃຫ້, ສ່ວນສ່ວຍສາອາກອນເມືອງໃດທີ່ຍັງບໍ່ໄດ້ນຳໃຊ້ລະບົບ Tax Ris ແມ່ນສົ່ງສຳນວນຄຳຮ້ອງດັ່ງກ່າວ ໃຫ້ສ່ວຍສາອາກອນປະຈຳນະຄອນຫລວງ ຫຼື ແຂວງ ທີ່ເມືອງນັ້ນຂຶ້ນກັບ ເປັນຜູ້ອອກເລກປະຈຳຕົວຜູ້ເສຍອາກອນໃຫ້ວິສາຫະກິດ.

2. ການອອກເລກປະຈຳຕົວຜູ້ເສຍອາກອນ ດ້ວຍລະບົບ Tax Ris ແມ່ນຈະຈຳແນກຜູ້ທີ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ຫລື ບໍ່ຢູ່ໃນລະບົບອາກອນມູນຄ່າເພີ່ມ ໄວ້ຢູ່ໃນລະບົບເທົ່ານັ້ນ ຈະບໍ່ໄດ້ສະແດງໃຫ້ເຫັນຢູ່ໃນໂຄງປະກອບເລກປະຈຳຕົວເລກໃດ ຄືກັນກັບການອອກໃຫ້ໃນເມື່ອກ່ອນ ຊຶ່ງກຳນົດດ້ວຍເລກ 9 ແມ່ນຢູ່ໃນລະບົບອາກອນມູນຄ່າເພີ່ມຫລືເລກ 0 ແມ່ນບໍ່ຢູ່ໃນລະບົບອາກອນມູນຄ່າເພີ່ມ;
3. ໃບທະບຽນວິສາຫະກິດທີ່ມີເລກປະຈຳຕົວຜູ້ເສຍອາກອນ ແມ່ນສາມາດນຳໃຊ້ ແລະ ປ່ຽນແທນໃບຢັ້ງຢືນການອອກເລກປະຈຳຕົວຜູ້ເສຍອາກອນ ແລະ ໃບທະບຽນອາກອນ ທີ່ໃຊ້ເພື່ອການຢັ້ງຢືນທາງລັດຖະການຕ່າງໆໃນເມື່ອກ່ອນ; ຫ້າມສ່ວຍສາອາກອນປະຈຳ ແຂວງ ແລະ ເມືອງ ອອກທະບຽນອາກອນ ຫລື ອອກໃບຢັ້ງຢືນໃດໆຕື່ມອີກ ພາຍຫລັງທີ່ວິສາຫະກິດໄດ້ໃບທະບຽນວິສາຫະກິດທີ່ມີເລກປະຈຳຕົວຜູ້ເສຍອາກອນແລ້ວ;
4. ວິສາຫະກິດທີ່ໄດ້ຮັບການຂຶ້ນທະບຽນວິສາຫະກິດພ້ອມເລກປະຈຳຕົວຜູ້ເສຍອາກອນແລ້ວ ແມ່ນຖືວ່າວິສາຫະກິດດັ່ງກ່າວ ໄດ້ຮັບຊາບ, ເຂົ້າໃຈ ກ່ຽວກັບການປະຕິບັດພັນທະອາກອນ, ປະຕິບັດການຖືບັນຊີ ຢ່າງຖືກຕ້ອງ ແລະ ປະຕິບັດອື່ນໆ ຕາມກົດໝາຍຂອງ ສປປ ລາວ ໄດ້ກຳນົດ;
5. ສຳລັບວິສາຫະກິດທີ່ໄດ້ຂຶ້ນທະບຽນວິສາຫະກິດໃໝ່ ເພື່ອໃຫ້ສາມາດເຄື່ອນໄຫວທຸລະກິດ ແລະ ສາມາດເປີດບັນຊີເງິນຝາກໃນການເຄື່ອນໄຫວທຸລະກິດໄດ້ ພາຍໃນປີທີ່ໄດ້ຂຶ້ນທະບຽນໃໝ່ນັ້ນ ແມ່ນໃຫ້ຖືເອົາໃບທະບຽນວິສາຫະກິດທີ່ມີເລກປະຈຳຕົວຜູ້ເສຍອາກອນ ເປັນເອກະສານຢັ້ງຢືນ ແລະ ເປັນເອກະສານການສະເໜີຕ່າງໆ;
6. ຜູ້ອຳນວຍການ ຫລື ເຈົ້າຂອງ ວິສາຫະກິດທີ່ຂຶ້ນທະບຽນໃໝ່ ພາຍຫລັງໄດ້ຮັບໃບທະບຽນວິສາຫະກິດທີ່ມີເລກປະຈຳຕົວຜູ້ເສຍອາກອນແລ້ວ ຕ້ອງເຂົ້າມາຮັບຟັງການປະຖົມນິເທດ ກ່ຽວກັບການປະຕິບັດພັນທະອາກອນຕ່າງໆ ນຳຂະແໜງສ່ວຍສາອາກອນບ່ອນທີ່ຕົນຂຶ້ນກັບ ພາຍໃນກຳນົດ 30 ວັນ ນັບແຕ່ວັນທີໄດ້ອອກໃບທະບຽນວິສາຫະກິດເປັນຕົ້ນໄປ, ຖ້າວິສາຫະກິດດັ່ງກ່າວຫາກບໍ່ເຂົ້າມາຮັບຟັງການປະຖົມນິເທດ ຕາມກຳນົດເວລາດັ່ງກ່າວ ຖືວ່າວິສາຫະກິດ ໄດ້ຮັບຊາບ ແລະ ເຂົ້າໃຈ ໃນການຈັດຕັ້ງປະຕິບັດການມອບພັນທະອາກອນ ແລະ ພ້ອມໃຫ້ປະຕິບັດມາດຕະການຕ່າງໆຕາມທີ່ລະບຽບ ແລະ ກົດໝາຍ ໄດ້ກຳນົດ ໃນກໍລະນີທີ່ວິສາຫະກິດໄດ້ມີການລະເມີດ.

ດັ່ງນັ້ນ, ຈຶ່ງແຈ້ງມາເພື່ອຊາບ ແລະ ພ້ອມກັນຈັດຕັ້ງປະຕິບັດຕາມເນື້ອໃນແຈ້ງການສະບັບນີ້ ຢ່າງເຂັ້ມງວດ.

ຫົວໜ້າຫ້ອງການກະຊວງ

ສຳເພົາ ເລົ່າສີ



Scanned with CamScanner